ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງສະຖາບັນການເງິນ

ເລກທີ 157 /ກຄສງ

ນະຄອນຫລວງວຽງຈັນ, ວັນທີ 17 FEB 2012

# ເງື່ອນໄຂ ແລະ ການປະກອບເອກະສານສ້າງຕັ້ງ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ

- ອີງຕາມ ຂໍ້ກຳນົດວ່າດ້ວຍການຄຸ້ມຄອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສະບັບເລກທີ 03/ທຫລ, ລົງວັນທີ 20 ມິຖຸນາ 2008.

ກົມຄຸ້ມຄອງສະຖາບັນການເງິນ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ທີ່ສົນໃຈຢາກສ້າງຕັ້ງ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຈະຕ້ອງປະຕິບັດເງື່ອນໄຂ ແລະ ການປະກອບເອກະສານສ້າງຕັ້ງ ດັ່ງລຸ່ມນີ້:

1. **ເງື່ອນໄຂ**

ກຸ່ມບຸກຄົນທີ່ຢາກສ້າງຕັ້ງ ສສງ ໃນ ສປປ ລາວຕ້ອງ:

1) ມີສິ່ງທີ່ຄ້າຍຄືກັນເຊັ່ນ: ມີອາຊີບດຽວກັນ ຫລື ອົງກອນດຽວກັນ ຫລື ປະຊາຊົນຢູ່ໃນຂົງເຂດດຽວກັນ;
2) ບັນລຸນິຕິພາວະ, ສັນຊາດລາວ ແລະ ດຳລົງຊີວິດຢູ່ ສປປ ລາວ;
3) ສະມາຊິກຂອງ ສສງ ມີ 02 ເງື່ອນໄຂ ດັ່ງນີ້:
   - ສະເພາະ ສສງ ທີ່ສ້າງຕັ້ງຂຶ້ນໃໝ່ ຕ້ອງມີ ສະມາຊິກລິເລີ່ມກໍ່ຕັ້ງຢ່າງໜ້ອຍ 10 ຄົນ ແລະ ມີສະມາຊິກເບື້ອງຕົ້ນຢ່າງໜ້ອຍ 100 ຄົນ;
   - ສະເພາະ ສະຖາບັນການເງິນ ຫລື ສະຫະກອນ (ປະເພດເຄິ່ງທາງການ) ທີ່ເຄີຍດຳເນີນທຸລະກິດມາກ່ອນ ມີຄວາມສົນໃຈ ຫັນເປັນ ສສງ ຕ້ອງມີສະມາຊິກຢ່າງໜ້ອຍ 250 ຄົນ ແລະ ມີຍອດເງິນຝາກສະແບບຫມັກໃຈ 300 ລ້ານກີບຂຶ້ນໄປ ແລະ ຕ້ອງໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ;

   (ໂດຍທັງ 02 ເງື່ອນໄຂດັ່ງກ່າວນີ້ ຈະຕ້ອງບໍ່ມີສະມາຊິກຜູ້ໃດຜູ້ໜຶ່ງຮ່ວມກັບພາກສ່ວນທີ່ມີສາຍພົວພັນກັບສະມາຊິກ ຖືຮຸ້ນຫລາຍກວ່າ 10% ຂອງທຶນເບື້ອງຕົ້ນ);
4) ສສງ ທັງ 02 ເງື່ອນໄຂດັ່ງກ່າວຕ້ອງມີ ທຶນຈົດທະບຽນເບື້ອງຕົ້ນ ຢ່າງໜ້ອຍ 100 ລ້ານກີບ.

2. <u>ການປະກອບເອກະສານ</u>

1) ຄໍາຮ້ອງ ຕາມແບບຟອມທີ່ ທຫລ ວາງອອກ;
2) ໃບຢັ້ງຢືນຮັບເງິນຈາກ ກົມບໍລິການ ທຫລ ຈໍານວນ 05 ແສນກີບ (ຄ່າບໍລິການ) ຫລື ຕາມການປ່ຽນແປງຂອງ ທຫລ ໃນແຕ່ລະໄລຍະ;
3) ກົດລະບຽບພາຍໃນຂອງ ສສງ (ຕາມຮ່າງທີ່ ທຫລ ວາງອອກ);
4) ເອກະສານຢັ້ງຢືນວ່າມີທຶນພຽງພໍທີ່ຈະນໍາມາຈົດທະບຽນຕໍ່າສຸດ 100 ລ້ານກີບ;
5) ບົດບັນທຶກກອງປະຊຸມຂອງສະມາຊິກຜູ້ກໍ່ຕັ້ງ ສສງ, ໂຄງຮ່າງການຈັດຕັ້ງ, ການເລືອກຕັ້ງສະມາຊິກສາພາບໍລິຫານ, ຄະນະກໍາມະການສິນເຊື່ອ ແລະ ຄະນະກໍາມະການກວດກາ;
6) ນະໂຍບາຍ ກ່ຽວກັບການລົງທຶນ, ການໃຫ້ສິນເຊື່ອ, ພະນັກງານ, ເກັບກູ້ໜີ້ສິນ, ການສ້າງຄັງແຮເພື່ອໜີ້ທວງຍາກ;
7) ແຜນການດໍາເນີນທຸລະກິດ 05 ປີ ທໍາອິດ;
8) ໃບຢັ້ງຢືນ ແລະ ແຜນວາດທີ່ຕັ້ງສໍານັກງານ ທີ່ເຊັນຮັບຮອງຈາກອໍານາດການປົກຄອງ;
9) ຊີວະປະຫວັດຂອງແຕ່ລະສະມາຊິກສະພາບໍລິຫານ ແລະ ຜູ້ຈັດການ;
10) ລາຍຊື່ ແລະ ພະນັກງານເບື້ອງຕົ້ນຂອງ ສສງ.

**ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ**

ທະນາຄານ ແຫ່ງ ສປປ ລາວ
ກົມຄຸ້ມຄອງສະຖາບັນການເງິນ

ດຣ. ອາຄົມ ປຣະເສີດ